ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------------------

ທະນາຄານແຫ່ງ ສປປ ລາວ

ເລກທີ 531 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 04 JUL 2016

# ຂໍ້ຕົກລົງ
# ວ່າດ້ວຍລະບົບການໂອນເງິນແບບທັນທີ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມການສະເໜີ ຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານ ທະນາຄານແຫ່ງ ສປປ ລາວ.

## ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບລະບົບການໂອນເງິນແບບທັນທີ ເພື່ອຮັບປະກັນການຊໍາລະເງິນພາຍໃນປະເທດ ໃຫ້ມີປະສິດທິພາບ, ປອດໄພ, ໂປ່ງໃສ ແລະ ວ່ອງໄວ ແນໃສ່ການຫຼຸດຜ່ອນຄວາມສ່ຽງ ທີ່ເກີດຂຶ້ນຈາກການຊໍາລະເງິນ, ສະໜັບສະໜູນການຊໍາລະໃຫ້ມີຄວາມຄ່ອງຕົວ ແລະ ເພີ່ມສະຖຽນລະພາບທາງດ້ານລະບົບການເງິນ ເພື່ອປະກອບສ່ວນເຂົ້າໃນການພັດທະນາລະບົບຊໍາລະແຫ່ງຊາດໃຫ້ທັນສະໄໝ ສາມາດເຊື່ອມໂຍງກັບລະບົບການຊໍາລະຂອງພາກພື້ນ ແລະ ສາກົນ.

**ມາດຕາ 2 ລະບົບການໂອນເງິນແບບທັນທີ**

ລະບົບການໂອນເງິນແບບທັນທີ (Real Time Gross Settlement : RTGS) ແມ່ນລະບົບການໂອນເງິນແບບເອເລັກໂຕຣນິກ ທີ່ທະນາຄານແຫ່ງ ສປປ ລາວ ພັດທະນາຂຶ້ນ ແລະ ເປັນຜູ້ໃຫ້ບໍລິການໂອນເງິນ ທັງເປັນສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ ຕາມຄໍາສັ່ງຜູ້ໃຊ້ບໍລິການ ດ້ວຍການປະຕິບັດເທື່ອລະທຸລະກໍາແບບທັນທີ ແລະ ບໍ່ສາມາດຍົກເລີກໄດ້.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບັນຊີຊໍາລະ** ໝາຍເຖິງ ບັນຊີເງິນຝາກ ຂອງຜູ້ໃຊ້ບໍລິການທີ່ເປີດໄວ້ນໍາກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ ເພື່ອນໍາໃຊ້ດໍາເນີນການເຮັດທຸລະກໍາໃນລະບົບ;
2. **ບັນຊີກະແສລາຍວັນ** ໝາຍເຖິງ ບັນຊີເງິນຝາກ ຂອງຜູ້ໃຊ້ບໍລິການທີ່ເປີດໄວ້ນໍາກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ ເພື່ອນໍາໃຊ້ຊໍາລະລະຫວ່າງຜູ້ໃຊ້ບໍລິການ ຫຼື ໂອນໄປບັນຊີອື່ນທີ່ກ່ຽວຂ້ອງ;
3. **ເຄືອຂ່າຍຂອງທະນາຄານແຫ່ງ ສປປ ລາວ** ໝາຍເຖິງ ລະບົບເຄືອຂ່າຍ ລະຫວ່າງທະນາຄານແຫ່ງ ສປປ ລາວ ກັບ ທະນາຄານທຸລະກິດ ແລະ ສະຖາບັນການເງິນ ລວມທັງພາກສ່ວນອື່ນ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;
4. **ລະບົບໂປຣແກຣມການບໍລິຫານທະນາຄານ** ໝາຍເຖິງ ການບໍລິຫານຄຸ້ມຄອງລະບົບບັນຊີ, ຊັບສິນບັດ ແລະ ບໍລິຫານການເງິນ ເພື່ອເຊື່ອມໂຍງກັບລະບົບການບໍລິການຕ່າງໆ ເຊັ່ນ ລະບົບການໂອນເງິນແບບທັນທີ, ລະບົບຊໍາລະບັດເອທີເອັມ ແລະ ອື່ນໆ;
5. **ຜູ້ໃຫ້ບໍລິການ** ໝາຍເຖິງ ກົມເຕັກໂນໂລຊີຂໍ້ມູນຂ່າວສານ, ທະນາຄານແຫ່ງ ສປປ ລາວ;
6. **ຜູ້ໃຊ້ບໍລິການ** ໝາຍເຖິງ ທະນາຄານທຸລະກິດ, ສະຖາບັນການເງິນ, ອົງການຈັດຕັ້ງລັດ ແລະ ນິຕິບຸກຄົນທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃຫ້ເຂົ້າໃຊ້ບໍລິການລະບົບການໂອນເງິນແບບທັນທີ;
7. **ທຸລະກໍາ** ໝາຍເຖິງ ການເຄື່ອນໄຫວທາງດ້ານການເງິນກ່ຽວກັບ ການໂອນເງິນເພື່ອຊໍາລະ ແລະ ບໍລິການອື່ນໆ;
8. **ທຸລະກໍາເຂົ້າລໍາດັບ** ໝາຍເຖິງ ຄໍາສັ່ງການໂອນເງິນທີ່ຜູ້ໃຊ້ບໍລິການ ສັ່ງໂອນເງິນເຂົ້າລະບົບການໂອນເງິນແບບທັນທີ ແຕ່ຍັງບໍ່ສາມາດດໍາເນີນການຫັກບັນຊີໄດ້ ເນື່ອງຈາກວ່າເງິນໃນບັນຊີຂອງຜູ້ໃຊ້ບໍລິການມີບໍ່ພຽງພໍ;
9. **ປະເພດຂໍ້ຄວາມ 202 (MT202)** ໝາຍເຖິງ ຄໍາສັ່ງໂອນເງິນລະຫວ່າງຜູ້ໃຊ້ບໍລິການດ້ວຍກັນ;
10. **ປະເພດຂໍ້ຄວາມ 103 (MT103)** ໝາຍເຖິງ ຄໍາສັ່ງໂອນເງິນລະຫວ່າງຜູ້ໃຊ້ບໍລິການດ້ວຍກັນ ເພື່ອໂອນໃຫ້ລູກຄ້າຂອງຕົນ;
11. **ປະເພດຂໍ້ຄວາມ 999 (MT999)** ໝາຍເຖິງ ຄໍາສັ່ງການໂອນເງິນຈາກບັນຊີກະແສລາຍວັນ ຫາ ບັນຊີຊໍາລະ ຫຼື ບັນຊີຊໍາລະ ຫາ ບັນຊີກະແສລາຍວັນຂອງຜູ້ໃຊ້ບໍລິການເອງ;
12. **ລະຫັດ SWIFT ( Society for Worldwide Interbank Financial Telecommunication )** ໝາຍເຖິງ ລະຫັດຂອງຜູ້ໃຊ້ບໍລິການໄດ້ຮັບຈາກສະມາຄົມຕິດຕໍ່ສື່ສານ ເພື່ອເປັນເຄື່ອງມືຕິດຕໍ່ສື່ສານທາງດ້ານການເງິນລະຫວ່າງທະນາຄານ ແລະ ສະຖາບັນການເງິນ;
13. **ຄອມພິວເຕີແມ່ຂ່າຍ** ໝາຍເຖິງ ຄອມພິວເຕີທີ່ໃຫ້ການບໍລິການລະບົບການໂອນເງິນແບບທັນທີ;
14. **ຄອມພິວເຕີລູກຂ່າຍ** ໝາຍເຖິງ ຄອມພິວເຕີຂອງຜູ້ໃຊ້ບໍລິການທີ່ເຊື່ອມຕໍ່ ເພື່ອແລກປ່ຽນຂໍ້ມູນ ໂດຍຜ່ານລະບົບເຄືອຂ່າຍຂອງທະນາຄານ ແຫ່ງ ສປປ ລາວ;
15. **ລະຫັດຜ່ານ** ໝາຍເຖິງ ລະຫັດທີ່ຜູ້ໃຊ້ບໍລິການຕ້ອງພິມເຂົ້າ ເພື່ອນໍາໃຊ້ລະບົບການໂອນເງິນແບບທັນທີ.

**ມາດຕາ 4 ຫຼັກການຂອງລະບົບການໂອນເງິນແບບທັນທີ**

ລະບົບການໂອນເງິນແບບທັນທີ ມີຫຼັກການ ດັ່ງນີ້:

1. ຮັບປະກັນການຊໍາລະຜ່ານລະບົບການໂອນເງິນແບບທັນທີ ພາຍໃນປະເທດໃຫ້ມີຄວາມປອດໄພ, ຄວາມໂປ່ງໃສ, ວ່ອງໄວ ແລະ ສາມາດໂອນໄດ້ທັນທີ;
2. ຫຼຸດຜ່ອນຄວາມສ່ຽງຂອງການຊໍາລະ ແລະ ການນໍາໃຊ້ເງິນສົດ;

3. ເຮັດທຸລະກຳມີຄວາມແນ່ນອນ ແລະ ຖືກຕ້ອງຕາມເປົ້າໝາຍ;
4. ປະຕິບັດຕາມລະບຽບຫຼັກການຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດ, ສະຖາບັນການເງິນ ອົງການຈັດຕັ້ງລັດ ແລະ ນິຕິບຸກຄົນ ທີ່ເຂົ້າຮ່ວມໃນລະບົບການໂອນເງິນແບບທັນທີ ຢູ່ ສປປ ລາວ.

## ໝວດທີ 2
## ການເປັນຜູ້ໃຊ້ບໍລິການຂອງລະບົບການໂອນເງິນແບບທັນທີ

**ມາດຕາ 6 ເງື່ອນໄຂຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນທະນາຄານທຸລະກິດ, ສະຖາບັນການເງິນ, ອົງການຈັດຕັ້ງລັດ ແລະ ນິຕິບຸກຄົນ ທີ່ມີທີ່ຕັ້ງ ຢູ່ ສປປ ລາວ;
2. ມີລະຫັດ SWIFT;
3. ມີບັນຊີຊໍາລະ;
4. ມີອຸປະກອນຕິດຕັ້ງລະບົບ ເຊັ່ນ ຄອມພິວເຕີຢ່າງໜ້ອຍ 2 ໜ່ວຍ ແລະ ລະບົບປະຕິບັດການທີ່ສາມາດຮອງຮັບໂປຣແກຣມການໂອນເງິນແບບທັນທີ ຕາມບົດແນະນຳທີ່ກ່ຽວຂ້ອງ.

**ມາດຕາ 7 ການສະເໜີຂໍເປັນຜູ້ໃຊ້ບໍລິການ**

ຜູ້ທີ່ມີຈຸດປະສົງຈະເປັນຜູ້ໃຊ້ບໍລິການ ຕ້ອງປະກອບເອກະສານ ແລະ ຍື່ນໜັງສືສະເໜີຕໍ່ຜູ້ໃຫ້ບໍລິການ ດັ່ງນີ້:

1. ໃບສະເໜີຂໍເຂົ້າເປັນຜູ້ໃຊ້ບໍລິການ ຕາມແບບຟອມຂອງທະນາຄານ ແຫ່ງ ສປປ ລາວ;
2. ສຳເນົາເອກະສານຢັ້ງຢືນກ່ຽວກັບການເປີດບັນຊີຊໍາລະ ເພື່ອນໍາໃຊ້ໃນລະບົບການໂອນເງິນແບບທັນທີ;
3. ສຳເນົາໃບທະບຽນວິສາຫະກິດ ແລະ ສຳເນົາໃບອະນຸຍາດສ້າງຕັ້ງຖາວອນ (ຍົກເວັ້ນອົງການຈັດຕັ້ງລັດ);
4. ໜັງສືແຕ່ງຕັ້ງຜູ້ຮັບຜິດຊອບລະບົບການໂອນເງິນແບບທັນທີ ໂດຍຜູ້ມີສິດອຳນາດເຊັນແຕ່ງຕັ້ງ;
5. ບົດບັນທຶກການເຊື່ອມຕໍ່ເຄືອຂ່າຍ ລະຫວ່າງທະນາຄານແຫ່ງ ສປປ ລາວ ກັບ ພາກສ່ວນທີ່ຕ້ອງການນຳໃຊ້ບໍລິການລະບົບການໂອນເງິນແບບທັນທີ;

**ມາດຕາ 8 ການພິຈາລະນາອະນຸຍາດ**

ຜູ້ໃຫ້ບໍລິການ ຈະພິຈາລະນາໜັງສືສະເໜີຂອງຜູ້ຂໍໃຊ້ບໍລິການ ແລະ ແຈ້ງຕອບເປັນລາຍລັກອັກສອນ ພາຍໃນກຳນົດເວລາ 15 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບໜັງສືສະເໜີຢ່າງຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ.

**ມາດຕາ 9 ການສິ້ນສຸດເປັນຜູ້ໃຊ້ບໍລິການ**

ທະນາຄານທຸລະກິດ, ສະຖາບັນການເງິນ, ອົງການຈັດຕັ້ງລັດ ແລະ ນິຕິບຸກຄົນ ຈະສິ້ນສຸດການເປັນຜູ້ໃຊ້ບໍລິການ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການຮ້ອງຂໍຂອງຜູ້ໃຊ້ບໍລິການເອງ;
2. ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງຂໍ້ຕົກລົງສະບັບນີ້;
3. ຖືກຍຸບເລີກ ຫຼື ລົ້ມລະລາຍ.

ໃນກໍລະນີຜູ້ໃຊ້ບໍລິການມີຈຸດປະສົງຂໍຍົກເລີກການເປັນຜູ້ໃຊ້ບໍລິການ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້ ຕ້ອງເຮັດໜັງສືສະເໜີຢ່າງເປັນລາຍລັກອັກສອນຫາຜູ້ໃຫ້ບໍລິການ, ພາຍຫຼັງໄດ້ຮັບເອກະສານແລ້ວ ຈະພິຈາລະນາ ແລະ ແຈ້ງຕອບພາຍໃນ 15 ວັນລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີເປັນຕົ້ນໄປ.

## ໝວດທີ 3
## ການບໍລິການຂອງລະບົບການໂອນເງິນແບບທັນທີ

**ມາດຕາ 10 ການບໍລິການໂອນເງິນແບບທັນທີ**

ການບໍລິການໂອນເງິນແບບທັນທີ ປະກອບມີ ດັ່ງນີ້:

1. ການໂອນເງິນລະຫວ່າງຜູ້ໃຊ້ບໍລິການດ້ວຍກັນ ແມ່ນຜູ້ໃຊ້ບໍລິການສາມາດໂອນເງິນຈາກບັນຊີຂອງຕົນເອງຫາບັນຊີຂອງຜູ້ໃຊ້ບໍລິການອື່ນ;
2. ການໂອນເງິນລະຫວ່າງຜູ້ໃຊ້ບໍລິການດ້ວຍກັນ ໃຫ້ບຸກຄົນທີສາມ ແມ່ນຜູ້ໃຊ້ບໍລິການສາມາດໂອນເງິນໃຫ້ລູກຄ້າ ຊຶ່ງລະບົບຈະສົ່ງຄຳສັ່ງ ລາຍລະອຽດການຮັບເງິນ ແລະ ຂໍ້ມູນຂອງລູກຄ້າໄປຫາຜູ້ໃຊ້ບໍລິການທີ່ຮັບເງິນ.

ນອກຈາກນັ້ນ ຜູ້ໃຊ້ບໍລິການຍັງສາມາດໂອນເງິນລະຫວ່າງບັນຊີຂອງຕົນເອງ ໂດຍການສົ່ງຂໍ້ຄວາມ 999 (MT 999) ຂອງຕົນເອງໄດ້.

**ມາດຕາ 11 ການໂອນເງິນເປັນສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ**

ຜູ້ໃຊ້ບໍລິການ ສາມາດໂອນເງິນເປັນສະກຸນເງິນກີບ ດ້ວຍການໃຊ້ປະເພດຂໍ້ຄວາມ 103 (MT 103), ປະເພດຂໍ້ຄວາມ 202 (MT 202) ແລະ ປະເພດຂໍ້ຄວາມ 999 (MT 999)

ສຳລັບສະກຸນເງິນຕາຕ່າງປະເທດ ຜູ້ໃຊ້ບໍລິການສາມາດໂອນເງິນໄດ້ 2 ສະກຸນເງິນຄື ບາດ ແລະ ໂດລາສະຫະລັດ ດ້ວຍການໃຊ້ປະເພດຂໍ້ຄວາມ 202 (MT 202 ) ແລະ ປະເພດຂໍ້ຄວາມ 999 (MT 999).

**ມາດຕາ 12 ການຫັກບັນຊີ**

ການຫັກບັນຊີໃນລະບົບການໂອນເງິນແບບທັນທີ ແມ່ນການຫັກບັນຊີເປັນແຕ່ລະທຸລະກຳຕາມເວລາຕົວຈິງ, ການຫັກບັນຊີດັ່ງກ່າວ ຈະຖືກປະຕິບັດທັນທີເມື່ອເງິນໃນບັນຊີຂອງຜູ້ສັ່ງໂອນມີພຽງພໍ, ຖ້າເງິນໃນບັນຊີຂອງຜູ້ສັ່ງໂອນມີບໍ່ພຽງພໍ ທຸລະກຳດັ່ງກ່າວຈະຖືກຈັດເຂົ້າລຳດັບ ເພື່ອລໍຖ້າເງິນໃນບັນຊີຂອງຜູ້ສັ່ງໂອນມີພຽງພໍ ຈຶ່ງສາມາດຫັກບັນຊີໄດ້.

**ມາດຕາ 13 ການຈັດທຸລະກຳເຂົ້າລຳດັບ**

ໃນກໍລະນີຜູ້ໃຊ້ບໍລິການ ສັ່ງໂອນເງິນເຂົ້າລະບົບການໂອນເງິນແບບທັນທີ, ແຕ່ຍັງບໍ່ສາມາດດຳເນີນການຫັກບັນຊີໄດ້ ເນື່ອງຈາກວ່າເງິນໃນບັນຊີຂອງຜູ້ໃຊ້ບໍລິການມີບໍ່ພຽງພໍ, ທຸລະກຳດັ່ງກ່າວຈະຖືກຈັດເຂົ້າລຳດັບ ແລະ ຜູ້ໃຊ້ບໍລິການສາມາດຈັດລຽງທຸລະກຳເຂົ້າລຳດັບຂອງຕົນເອງໄດ້.

ໃນກໍລະນີຜູ້ໃຊ້ບໍລິການມີຈຸດປະສົງຢາກຍົກເລີກທຸລະກຳຢູ່ໃນລຳດັບຂອງຕົນເອງ ສາມາດດຳເນີນການຍົກເລີກທຸລະກຳທີ່ຄ້າງຢູ່ໃນລຳດັບຂອງຕົນເອງໄດ້. ສຳລັບທຸລະກຳໃດທີ່ຖືກຫັກບັນຊີແລ້ວ ແມ່ນບໍ່ສາມາດຍົກ ເລີກໄດ້.

ຄຳສັ່ງໂອນທີ່ຍັງຄ້າງຢູ່ໃນລຳດັບຈະຖືກຍົກເລີກ ເມື່ອສິ້ນສຸດເວລາການໃຫ້ບໍລິການລະບົບໃນແຕ່ລະວັນ ແບບອັດຕະໂນມັດ ແລະ ລະບົບຈະສະແດງຂໍ້ຄວາມຢືນຢັນການຍົກເລີກທັນທີ.

**ມາດຕາ 14 ການກຳນົດເວລາໃນການບໍລິການ**

ລະບົບການໂອນເງິນແບບທັນທີ ແມ່ນເປີດບໍລິການໃນວັນລັດຖະການເລີ່ມແຕ່ ເວລາ 9:00 ໂມງ ຫາ 15:30 ໂມງ, ເວັ້ນແຕ່ ທະນາຄານແຫ່ງ ສປປ ລາວ ຈະແຈ້ງໃຫ້ຜູ້ໃຊ້ບໍລິການຊາບກ່ຽວກັບການປ່ຽນແປງເວລາດັ່ງກ່າວ.

**ມາດຕາ 15 ຄ່າບຳລຸງຮັກສາ ແລະ ຄ່າບໍລິການລະບົບ**

ຜູ້ໃຊ້ບໍລິການ ຕ້ອງຈ່າຍຄ່າບຳລຸງຮັກສາ ແລະ ຄ່າບໍລິການເປັນແຕ່ລະທຸລະກຳ ໃຫ້ແກ່ຜູ້ໃຫ້ບໍລິການດ້ວຍການໂອນເຂົ້າບັນຊີລາຍຮັບຂອງທະນາຄານແຫ່ງ ສປປ ລາວ ດັ່ງນີ້:

1. ຄ່າບຳລຸງຮັກສາລະບົບປະຈຳປີ ຈຳນວນ 2.000.000 (ສອງລ້ານ) ກີບຕໍ່ປີ ຊຶ່ງຕ້ອງຊຳລະພາຍໃນອາທິດທີສອງຂອງເດືອນມັງກອນຂອງແຕ່ລະປີ;
2. ຄ່າບໍລິການເປັນແຕ່ລະທຸລະກຳ ຈຳນວນ 5.000 (ຫ້າພັນ) ກີບຕໍ່ຄັ້ງ ຊຶ່ງຕ້ອງຊຳລະເປັນເດືອນ ພາຍໃນອາທິດທີໜຶ່ງຂອງເດືອນຖັດໄປ.

ຄ່າບຳລຸງຮັກສາລະບົບ ແລະ ຄ່າບໍລິການ ຈະມີການປ່ຽນແປງຕາມຄວາມເໝາະສົມໃນແຕ່ລະໄລຍະຕາມການກຳນົດຂອງຜູ້ໃຫ້ບໍລິການ.

ຜູ້ໃຫ້ບໍລິການ ຈະສົ່ງລາຍລະອຽດກ່ຽວກັບຈຳນວນເງິນທີ່ຕ້ອງຊຳລະຜ່ານລະບົບເອເລັກໂຕຣນິກ ຫຼື ສົ່ງເປັນລາຍລັກອັກສອນໃຫ້ຜູ້ໃຊ້ບໍລິການ, ຖ້າກາຍກຳນົດເວລາຊຳລະ ຜູ້ໃຫ້ບໍລິການ ຈະຫັກເງິນຈາກບັນຊີກະແສລາຍວັນຂອງຜູ້ໃຊ້ບໍລິການທີ່ຝາກໄວ້ນຳທະນາຄານແຫ່ງ ສປປ ລາວ ໂດຍອັດຕະໂນມັດ ແລະ ຈະແຈ້ງໃຫ້ຜູ້ໃຊ້ບໍລິການ ຊາບຕາມພາຍຫຼັງ.

## ໝວດທີ 4
## ສິດ ແລະ ໜ້າທີ່ຂອງ ຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງຜູ້ໃຫ້ບໍລິການ**

ຜູ້ໃຫ້ບໍລິການ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້ານິຕິກຳຕ່າງໆ ທີ່ຕິດພັນກັບວຽກງານການຄຸ້ມຄອງລະບົບການໂອນເງິນແບບທັນທີ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ຄົ້ນຄວ້າ ແລະ ພິຈາລະນາ ການສະເໜີ ແລະ ການສິ້ນສຸດການເປັນຜູ້ໃຊ້ບໍລິການ;
3. ໂຈະໜຶ່ງ ຫຼື ຫຼາຍການໃຫ້ບໍລິການຊົ່ວຄາວ ໃນລະບົບການໂອນເງິນແບບທັນທີຕໍ່ຜູ້ໃຊ້ບໍລິການທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ;
4. ຕິດຕາມ ແລະ ກວດກາລະບົບ ເພື່ອເກັບກຳຂໍ້ມູນຜູ້ໃຊ້ບໍລິການ, ກວດກາດ້ານອຸປະກອນ ແລະ ຄວາມປອດໄພຂອງລະບົບ;
5. ກະກຽມຊຸດຄຳສັ່ງ ແລະ ຄູ່ມືການນຳໃຊ້ລະບົບ ໃຫ້ແກ່ຜູ້ໃຊ້ບໍລິການ;
6. ຮັບປະກັນຄວາມຕໍ່ເນື່ອງການໃຫ້ບໍລິການລະບົບການໂອນເງິນແບບທັນທີ ຕະຫຼອດໄລຍະເວລາທີ່ໃຫ້ບໍລິການ;
7. ຄວບຄຸມ, ຮັກສາຄວາມປອດໄພຂອງລະບົບແມ່ຂ່າຍ, ລະບົບປະຕິບັດການທີ່ໃຊ້ໃນລະບົບ ແລະ ສະຖານທີ່ດຳເນີນການຂອງລະບົບແມ່ຂ່າຍ;
8. ຝຶກອົບຮົມ, ເຜີຍແຜ່ ແລະ ແນະນຳ ກ່ຽວກັບລະບົບການໂອນເງິນແບບທັນທີ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 17 ສິດ ແລະ ໜ້າທີ່ຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ເປີດບັນຊີຊຳລະເປັນສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ ເພື່ອຊຳລະລະຫວ່າງ ຜູ້ໃຊ້ບໍລິການດ້ວຍກັນ;
2. ໄດ້ຮັບຄວາມສະດວກໃນການໂອນເງິນລະຫວ່າງບັນຊີກະແສລາຍວັນ ແລະ ບັນຊີຊຳລະຂອງຕົນເອງໃນລະບົບ;
3. ໄກ່ເກ່ຍກັບຜູ້ຮັບໂອນ ໃຫ້ໂອນເງິນຄືນ ແລະ ຮັບຜິດຊອບຄ່າທຳນຽມການໂອນດັ່ງກ່າວ ໃນກໍລະນີທີ່ສັ່ງໂອນຜິດພາດ;
4. ສະເໜີຂໍເຊື່ອມຕໍ່ລະບົບໂປຣແກຣມການບໍລິຫານທະນາຄານຂອງຕົນເອງ ກັບລະບົບການໂອນເງິນແບບທັນທີ;
5. ດັດແກ້ ແລະ ນຳໃຊ້ ໜຶ່ງ ຫຼື ຫຼາຍ ຈຸດຂອງການປະຕິບັດງານຂອງລະບົບ ເຊັ່ນ ການປັບປຸງຂໍ້ມູນ, ປ່ຽນລະຫັດຜ່ານຂອງຜູ້ໃຊ້ບໍລິການເອງ, ປັບປຸງຂໍ້ມູນໃບຢັ້ງຢືນເອເລັກໂຕຣນິກ ແລະ ອື່ນໆ ຕາມການອະນຸຍາດຂອງຜູ້ໃຫ້ບໍລິການ;
6. ແຈ້ງຜູ້ໃຫ້ບໍລິການຊາບທັນທີ ກ່ຽວກັບເຫດຂັດຂ້ອງ ຫຼື ກໍລະນີບໍ່ສາມາດນຳໃຊ້ລະບົບໄດ້ ເພື່ອດຳເນີນການກວດກາ ແລະ ແກ້ໄຂຢ່າງທັນການ ຊຶ່ງໃນໄລຍະດັ່ງກ່າວ ຜູ້ໃຊ້ບໍລິການ ສາມາດສະເໜີຂໍເຮັດທຸລະກຳໂອນເງິນໄດ້ຕາມຄວາມຈຳເປັນ;
7. ແຈ້ງລາຍຊື່ຜູ້ທີ່ຮັບຜິດຊອບລະບົບການໂອນເງິນແບບທັນທີ ໃຫ້ແກ່ຜູ້ໃຫ້ບໍລິການຊາບໃນກໍລະນີທີ່ມີການປ່ຽນແປງຜູ້ຮັບຜິດຊອບວຽກງານດັ່ງກ່າວ;
8. ເປີດລະບົບການໂອນເງິນແບບທັນທີ ໄວ້ຕະຫຼອດໄລຍະເວລາການໃຫ້ບໍລິການລະບົບ ແລະ ເອົາໃຈໃສ່ກວດກາສະຖານະການເຊື່ອມຕໍ່ ກັບເຄືອຂ່າຍຂອງທະນາຄານແຫ່ງ ສປປ ລາວ ເຖິງວ່າຈະບໍ່ມີລາຍການໂອນກໍ່ຕາມ;
9. ຮັກສາ ແລະ ຄຸ້ມຄອງລະບົບປະຕິບັດການ ແລະ ໂປຣແກຣມໂອນເງິນແບບທັນທີພາຍໃນຂອງຕົນເອງໃຫ້ມີຄວາມປອດໄພ, ປ້ອງກັນຄວາມເສຍຫາຍທີ່ອາດຈະເກີດຂຶ້ນ ແລະ ຮັບປະກັນໃຫ້ລະບົບສາມາດໃຊ້ງານໄດ້ຢ່າງຕໍ່ເນື່ອງ;

10. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກແກ່ພະນັກງານຂອງ ທະນາຄານແຫ່ງ ສປປ ລາວ ໃນການກວດກາ ເຊັ່ນ ລະບົບຄອມພິວເຕີ ແລະ ໂປຣແກຣມອື່ນໆ ທີ່ກ່ຽວຂ້ອງກັບລະບົບການໂອນເງິນແບບທັນທີ ມາດຕະຖານຮັກສາຄວາມປອດໄພ, ລະບົບການຄວບຄຸມພາຍໃນ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 18 ຂໍ້ຫ້າມ**

ຫ້າມຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ມີພຶດຕິກຳ ດັ່ງນີ້:

1. ເຮັດທຸລະກຳທີ່ຂັດກັບລະບຽບກົດໝາຍຂອງ ສປປ ລາວ;
2. ຖ່ວງດຶງເວລາ ການໂອນເງິນ ຫຼື ການເຮັດທຸລະກຳທາງການເງິນຂອງລູກຄ້າ ໃນກໍລະນີທີ່ເປັນການດຳເນີນທຸລະກຳທີ່ສອດຄ່ອງກັບກົດໝາຍ;
3. ເປີດເຜີຍຂໍ້ມູນຂອງລະບົບການໂອນເງິນແບບທັນທີ ເວັ້ນແຕ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;
4. ເປີດເຜີຍຂໍ້ມູນຂອງລະບົບການໂອນເງິນແບບທັນທີ ເມື່ອສິ້ນສຸດການເປັນຜູ້ໃຊ້ບໍລິການ;
5. ພຶດຕິກຳອື່ນໆ ທີ່ສ້າງຄວາມເສຍຫາຍໃນລະບົບການໂອນເງິນແບບທັນທີ.

**ມາດຕາ 19 ມາດຕະການຕໍ່ຜູ້ລະເມີດ**

ຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາແລ້ວແຕ່ລະກໍລະນີເບົາ ຫຼື ໜັກ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 20 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ທະນາຄານທຸລະກິດ, ສະຖາບັນການເງິນ, ອົງການຈັດຕັ້ງລັດ ແລະ ນິຕິບຸກຄົນ ທີ່ນຳໃຊ້ລະບົບການໂອນເງິນແບບທັນທີ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງໃຜລາວ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**